# ການເຕີບໂຕສີຂຽວ ກັບການພັດທະນາ ເຂດເນີນສູງຂອງ ສປປ ລາວ

ສີວຽງໄຊ ອໍລະບູນ
ສຄສຊ

ກອງປະຊຸມວິຊາການກ່ຽວກັບເຂດເນີນສູງ
ມະຫາວິທະຍາໄລສຸພານຸວົງ, ແຂວງຫລວງພະບາງ
12 – 14 ມີນາ 2018

# ສາລະບານນຳສະເໜີບົດ

- ຂໍ້ລິເລີ່ມກ່ຽວກັບການເຕີບໂຕສີຂຽວຢູ່ ສປປ ລາວ
- ຄວາມໝາຍສຳຄັນຂອງການເຕີບໂຕສີຂຽວ ຕໍ່ການພັດທະນາເຂດເນີນສູງຂອງ ສປປ ລາວ
- ສະຫລຸບ

# ຂໍ້ມູນເລີ່ມກ່ຽວກັບການເຕີບໂຕສີຂຽວຢູ່ ສປປ ລາວ

**ວິໄສທັດ ແລະ ວາລະການພັດທະນາຂອງປະເທດ**

- ວິໄສທັດເຖິງປີ 2030
- ວິໄສທັດເຖິງປີ 2020 ແລະ ການຂ້າມຜ່ານແບບຍືນຍົງ
- ບັນລຸເປົ້າໝາຍ SDGs, ການລົບລ້າງຄວາມທຸກຍາກ ແລະ ການກະຈາຍຄວາມມັ່ງຄັ່ງຢ່າງທົ່ວເຖິງ

**ແຜນຍຸດທະສາດການເຕີບໂຕສີຂຽວແຫ່ງ ສປປ ລາວ**

**ບັນດາຍຸດທະສາດລັດດັບຊາດທີ່ມີ**

- ຍຸດທະສາດ 10 ປີ (2016-2025)
- ຍຸດທະສາດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ
- ຍຸດທະສາດດ້ານການປ່ຽນແປງດິນຟ້າອາກາດແຫ່ງຊາດ
- ຍຸດທະສາດຂະແໜງການ ແລະ ທ້ອງຖິ່ນ

**ບັນດາແຜນແມ່ບົດພັດທະນາທີ່ມີ**

- ແຜນແມ່ບົດພັດທະນາ 9 ແຂວງພາກເໜືອ
- ແຜນແມ່ບົດ 3 ຫລ່ຽມພາກໃຕ້
- ອື່ນໆ

**ແຜນພັດທະນາໄລຍະກາງ**

- ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ
- ແຜນພັດທະນາ 5 ປີ ຂອງຂະແໜງການ
- ແຜນພັດທະນາ 5 ປີ ຂອງທ້ອງຖິ່ນ.

**ແຜນພັດທະນາປະຈໍາປີ**

- ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈໍາປີ
- ແຜນພັດທະນາປະຈໍາປີຂອງຂະແໜງການ ແລະ ທ້ອງຖິ່ນ.

**ແຜນງານແຫ່ງຊາດດ້ານການລົງທຶນຂອງລັດ ແລະ ໂຄງການລົງທຶນຂອງລັດ**

# ທິດນຳຍຸດທະສາດຂອງການເຕີບໂຕສີຂຽວ

1. ຮັບປະກັນການເຕີບໂຕດ້ານເສດຖະກິດ;
2. ຮັບປະກັນຄວາມມີປະສິດທິຜົນ;
3. ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ;
4. ຮັບປະກັນການມີສ່ວນຮ່ວມ; ແລະ
5. ຮັບປະກັນການພັດທະນານະວັດຕະກຳໃໝ່.

# ກຳນົດຂະແໜງການບຸລິມະສິດ

- ຂະແໜງການ:
  1. ກະສິກຳ
  2. ປ່າໄມ້
  3. ການພັດທະນາຕົວເມືອງ
  4. ຂົນສົ່ງ
  5. ພະລັງງານ
  6. ທ່ອງທ່ຽວ

- ຂະແໜງການປິ່ນອ້ອມ:
  1. ຖະແຫລງຂ່າວ
  2. ສຶກສາ
  3. ວິທະຍາສາດ & ເຕັກໂນໂລຊີ
  4. ສິ່ງແວດລ້ອມ

# ຄວາມໝາຍສຳຄັນຂອງການເຕີບໂຕສີຂຽວຕໍ່ການພັດທະນາເຂດເນີນສູງຢູ່ ສປປ ລາວ

- ເນື້ອທີ່ດິນປະມານ 2/3 ຂອງ ສປປ ລາວ ແມ່ນເຂດພູດອຍ
- ປະຊາກອນຫລາຍກວ່າ 3/5 ຍ ັງອາໃສຢູ່ເຂດພູດອຍ, ຊົນນະບົດຫ່າງໄກສອກຫຼີກ
- ຈຳນວນຄົນທຸກຍາກ ຫລາຍກວ່າ 80% ອາໃສຢູ່ເຂດພູດອຍຫ່າງໄກສອກຫລີກ
- ປະຊາກອນສ່ວນໃຫຍ່ຍັງອາໃສການກະສິກຳເປັນແຫລ່ງສະບຽງອາຫານ ແລະ ລາຍຮັບ
- ສະພາບການພັດທະນາດ້ານພື້ນຖານໂຄງລ່າງຍັງບໍ່ເຂັ້ມແຂງ ເຊິ່ງເປັນຂໍ້ຫຍຸ້ງຍາກໃຫ້ແກ່ການຄົມມະນາຄົມຂົນສົ່ງ ແລະ ຈໍລະຈອນສິນຄ້າ
- ການແກ້ໄຂຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຈຶ່ງເປັນບຸລິມະສິດຕົ້ນຕໍຂອງການພັດທະນາເຂດເນີນສູງ.

# ການແກ້ໄຂຄວາມທຸກຍາກຂອງປະຊາຊົນເຂດເນີນສູງ

- 3 ວິທີທາງຕົ້ນຕໍ:
  - ການສ້າງລາຍໄດ້ຈາກການກະສິກໍາ
  - ການສ້າງລາຍໄດ້ຈາກວຽກເຮັດງານທໍາທີ່ບໍ່ແມ່ນກະສິກໍາ
  - ການສ້າງລາຍໄດ້ຈາກການໄປເຮັດວຽກງານຢູ່ເຂດຕົວເມືອງ

# ການສ້າງລາຍໄດ້ຈາກການກະສິກຳ

- ດ້ວຍການຍົກສູງຜະລິດຕະພາບຂອງຂະແໜງກະສິກຳຢູ່ເຂດເນີນສູງ:
  - ພັດທະນາ ແລະ ນຳໃຊ້ເຕັກນິກກະສິກຳໃໝ່ທີ່ເໝາະສົມຢູ່ໃນເຂດເນີນສູງ (ນຳໃຊ້ເຄື່ອງມື/ເຄື່ອງກົນຈັກທີ່ແທດເໝາະ; ມີການປັບປຸງແນວພັນທີ່ແທດເໝາະ ແລະ ນຳໃຊ້ເຕັກນິກດ້ານຊີວະພູມສັນຖານທີ່ເໝາະສົມ)
  - ພັດທະນາດ້ານສະຖາບັນຢ່າງປະດິດສ້າງ ແລະ ແທດເໝາະ

# ການສ້າງລາຍໄດ້ຈາກວຽກເຮັດງານທໍາທີ່ບໍ່ແມ່ນກະສິກໍາ

- ຄົ້ນຄວ້າສ້າງວຽກເຮັດງານທໍາທີ່ບໍ່ແມ່ນຂະແໜງກະສິກໍາ ຕິດພັນກັບການເຕີບໂຕສີຂຽວ ໂດຍສະເພາະແມ່ນຊຸກຍູ້ສົ່ງເສີມການຟື້ນຟູວັດທະນະທໍາ ແລະ ສີມືແຮງງານຈາກຮີດຄອງປະເພນີຂອງທ້ອງຖິ່ນ ຕິດພັນກັບການທ່ອງທ່ຽວສີຂຽວ, ການໂດຍສານສີຂຽວ ແລະ ອື່ນໆ.

# ການສ້າງລາຍໄດ້ຈາກການໄປເຮັດວຽກງານຢູ່ເຂດຕົວເມືອງ

- ເອົາໃຈໃສ່ວຽກງານການສຶກສາ ແລະ ການເຝິກອົບຮົມເພື່ອສ້າງຄວາມອາດສາມາດໃຫ້ແກ່ແຮງງານຊົນນະບົດ ແລະ ໃນເຂດເນີນສູງ ສາມາດເຂົ້າເຖິງວຽກເຮັດງານທຳຢູ່ເຂດຕົວເມືອງ ທັງພາຍໃນ ແລະ ຕ່າງປະເທດ.

# ສະຫລຸບ

- ຄຸນນະພາບຂອງວຽກງານສົ່ງເສີມກະສິກຳ ແມ່ນຄວາມຈຳເປັນອັນດັບຕົ້ນທີ່ຕ້ອງເອົາໃຈໃສ່ ເຊິ່ງຕ້ອງຮັບປະກັນໃຫ້ໄດ້ທັງ 2 ດ້ານຄື:
  – ການຍົກສູງຄຸນນະພາບ ແລະ ສີມືແຮງງານດ້ານເຕັກນິກກະສິກຳໃຫ້ຊາວກະສິກອນຢູ່ເຂດຊົນນະບົດ/ເນີນສູງ
  – ການຍົກສູງຄຸນນະພາບຊີວິດການເປັນຢູ່ໃນເຂດເນີນສູງ ດ້ວຍການຈັດເຝິກອົບຮົມໃຫ້ທຸກຊັ້ນຄົນ (ແມ່ຍິງ, ເດັກນ້ອຍ…)
- ສູນສົ່ງເສີມການເຕີບໂຕສີຂຽວ ຕ້ອງສົມທົບກັບຂະແໜງສົ່ງເສີມຢ່າງສະໜິດແໜ້ນ ເພື່ອຮັບປະກັນວຽກງານສົ່ງເສີມໃຫ້ມີຄຸນນະພາບສູງ.

# ບາງເອກະສານອ້າງອີງ

❖ ວິໄສທັດ 2030 ແລະ ຍຸດທະສາດພັດທະນາເສດຖະກິດ-ສັງຄົມໄລຍະ 10 ປີ (2016-2025) ຂອງ ສປປ ລາວ.

❖ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງຊາດ (2016-2020).

❖ ການກະສິກໍາຕາມສັນຍາ ຢູ່ປະເທດພັດທະນາແລ້ວ ແລະ ປະເທດກໍາລັງພັດທະນາ. ວາລະສານ Review in Advance.

❖ ເສັ້ນທາງການຫລຸດພົ້ນຈາກຄວາມທຸກຍາກຢູ່ເຂດຊົນນະບົດຂອງ ສປປ ລາວ. ວາລະສານການຄົ້ນຄວ້າເລກທີ E-94 ຂອງ TCER

❖ ທິດສະດີເສດຖະສາດ, ການຂ້າມຜ່ານ ແລະ ທາງເລືອກທາງດ້ານເສດຖະກິດ: ການປະຍຸກໃຊ້ໃນ ສປປ ລາວ. ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ.

❖ ການພັດທະນາແບບຍືນຍົງຢູ່ເຂດເນີນສູງຂອງ ສປປ ລາວ. ວາລະສານການພັດທະນາແບບຍືນຍົງ.

❖ ສະຖິຕິການສໍາຫລວດກະສິກໍາ-ປ່າໄມ້ຂອງ ສປປ ລາວ ປະຈໍາສົກປີ 2010-2011.

❖ ການພັດທະນາກະສິກໍາ: ຈາກມູມມອງລະຫວ່າງປະເທດ. ມະຫາວິທະຍາໄລໂຈນຮອບຄິນ.

# ຂໍຂອບໃຈ!?